ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບໍລິສັດ ຊີມັງລາວ ມະຫາຊົນ
# LAO CEMENT PUBLIC COMPANY

**ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: ( 865-21 ) 451222,451116 ແຟັກ:451117**
**PHONPHANAO VIENTIANE, LAO P.D.R. P.O.BOX 6821, TEL : ( 856 - 21 ) 451222,451116 FAX:451117**
**E-mail:Lcc@laocement.com,www.laocement.com**

ເລກທີ: 131 /ບຊລ

ທີ່ນະຄອນຫຼວງວຽງຈັນ, ວັນທີ: 12 APR 2024

**ຮຽນ:** ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ຂອງຕະຫຼາດຫຼັກຊັບລາວ,
ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ.

**ເລື່ອງ:** ລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດ ຂອງບໍລິສັດ ປະຈຳໄຕມາດ 1 ປີ 2024.

- ຂໍ້ຕົກລົງວ່າດ້ວຍການຮັບຮອງບົດແຜນການປັບປຸງ ແລະ ຟື້ນຟູກິດຈະການຂອງບໍລິສັດຊີມັງ ລາວ ມະຫາຊົນ ສະບັບເລກທີ 1958/ກປທ, ລົງວັນທີ 21/4/2022.
- ອີງຕາມແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ສະບັບລົງວັນທີ 30/12/2021

ບໍລິສັດ ຊີມັງລາວ ມະຫາຊົນ (ບລຊ) ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບກ່ຽວກັບ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ນັບແຕ່ບໍລິສັດໄດ້ ເຂົ້າສູ່ຂະບວນການຟື້ນກິດຈະການ ເຊິ່ງມີລາຍລະອຽດ ດັ່ງນີ້:

1. ສຳລັບວຽກງານການຊື້ຮຸ້ນຂອງບໍລິສັດ ຫຼັກຊັບລາວ-ຈີນ ຈຳກັດ ແລະ ຜູ້ຖືຮຸ້ນລາຍຍ່ອຍ ຍັງບໍ່ ທັນສຳເລັດເນື່ອງຈາກວ່າເງິນທຶນຍັງບໍ່ທັນມີຄາດວ່າຈະສຳເລັດພາຍໃນທ້າຍ 2024.
2. ໂຄງການກໍ່ສ້າງສອນສາທິດເສດຖະກິດອຸດສາຫະກຳທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງຈະ ເລີ່ມລົງມືການກໍ່ສ້າງໃນທ້າຍເດືອນ 4/2024 ນີ້.
3. ສຳລັບການຈ່າຍເງິນອຸດໜູນອອກການໃຫ້ອາດີດພະນັກງານ ຂອງບໍລິສັດ ແມ່ນໄດ້ຈ່າຍໄປແລ້ວ 65% ແລະອີກ 35% ຈະສຳເລັດພາຍໃນເດືອນ 6/2024 ນີ້.

ດັ່ງນັ້ນ, ຈຶ່ງລາຍງານມັງຍັງທ່ານເພື່ອຊາບ.

ຮຽນດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

**ຜູ້ອຳນວຍການໃຫຍ່ ບໍລິສັດ**

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ເນ້ຍເຫຼ່ຍ